# BOL ແລະ ADB ສືບຕໍ່ເພີ່ມການຮ່ວມມື



* ຂ່າວ-ພາບ: ຣັດສະໝີ ດວງສັດຈະ

ໃນວັນທີ 24 ກຸມພາ ຜ່ານມານີ້ ທ່ານ ພູເພັດ ຄໍາພູນວົງ ຜູ້ວ່າການທະນາຄານແຫ່ງ ສປປ ລາວ (BOL) ໄດ້ໃຫ້ກຽດຕ້ອນຮັບ ທ່ານຫົວໜ້າກົມອາຊີຕາເວັນອອກສ່ຽງໃຕ້ຂອງທະນາຄານພັດທະນາອາຊີ (ADB) ທີ່ມີສໍານັກງານໃຫຍ່ຕັ້ງຢູ່ປະເທດຟີລິບປິນ ເນື່ອງຈາກທ່ານໄດ້ເຂົ້າຮັບໜ້າທີ່ໃໝ່.

ໃນການພົບປະດັ່ງກ່າວຄະນະນໍາລະດັບສູງຂອງ ADB ໄດ້ຕີລາຄາສູງຕໍ່ ສປປ ລາວ ທີ່ໄດ້ຮັກສາສະຖຽນລະພາບເງິນຕາແຫ່ງຊາດຢ່າງໝັ້ນທ່ຽງທ່າມກາງວິກິດການການເງິນສາກົນ, ໂດຍສະເພາະໄດ້ສັນລະເສີນບັນດາຄະນະຜູ້ວ່າການ BOL ທີ່ມີຄວາມພະຍາຍາມເຮັດໃຫ້ບັນຫາດັ່ງກ່າວໄດ້ຜ່ານພົ້ນໄປດ້ວຍຄວາມຈົບງາມ ໃນໂອກາດດຽວກັນນັ້ນເຈົ້າໜ້າທີ່ຂັ້ນສູງ ທ່ານນີ້ຍັງຢືນຢັນຈະສືບຕໍ່ມີການພົວພັນ ແລະ ຮ່ວມມືລະຫວ່າງ ADB ກັບ ສປປ ລາວໃຫ້ດີຂຶ້ນກ່ວາເກົ່າ, ໂດຍສະເພາະ ADB ໃຫ້ການສະໜັບສະໜູນການພັດທະນາຊັບພະຍາກອນມະນຸດໃຫ້ຂະແໜງການທະນາຄານຂອງ ສປປ ລາວ.

ທ່ານ ພູເພັດ ຄໍາພູນວົງ ໄດ້ທົບທວນຄືນບັນດາໝາກຜົນແຫ່ງການພົວພັນຮ່ວມມືລະຫວ່າງ ສປປ ລາວ ແລະ ADB ໃນໄລຍະຜ່ານມາເຊິ່ງ ADB ໄດ້ໃຫ້ການຊ່ວຍເຫຼືອອັນລໍ້າຄ່າໃຫຍ່ຫຼວງໃນຫຼາຍດ້ານ ເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ ເປັນການປະສ່ວນເຮັດໃຫ້ ສປປ ລາວ ໄດ້ມີການພັດທະນາໃຫ້ດີຂຶ້ນເປັນກ້າວໆ, ໂດຍສະເພາະ ADB ໄດ້ໃຫ້ການຊ່ວຍເຫຼືອແກ່ຂະແໜງການທະນາຄານຂອງລາວທາງດ້ານທຶນຮອນ ແລະ ວິຊາການ, ຂໍອວຍພອນໃຫ້ການປະຕິບັດໜ້າທີ່ໃໝ່ ຂອງທ່ານຈົ່ງປະສົບຜົນສໍາເລັດອັນສະຫງ່າງາມ ແລະ ສືບຕໍ່ມີການພົວພັນຮ່ວມມືລະຫວ່າງ ADB ແລະ BOL ໃຫ້ຈະເລີນງອກງາມ